# ສະບາຍດີປີໃໝ່

# ຄ.ສ.2013



## ປີມະໂລງ-ປີມະເສັງ
## ພ.ສ.໒໕໕໕-ພ.ສ.໒໕໕໖

ລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແມ່ນລັດປະຊາທິປະໄຕປະຊາຊົນ, ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ຊຶ່ງປະກອບດ້ວຍບັນດາຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ປັນຍາຊົນເປັນຫຼັກແຫຼ່ງ.

(ມາດຕາ 2 ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບເລກທີ 32/ສປປ, ລົງວັນທີ 23/5/2003)

# ປະຊາຊົນ ມີສ່ວນຮ່ວມໃນການຕັດສິນບັນຫາການເຊົ່າ ແລະ ສຳປະທານທີ່ດິນ



## ສິດ ແລະ ໜ້າທີ່ຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ

**ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆມີສິດ ແລະ ໜ້າທີ່ດັ່ງນີ້:**

**ຂໍ້ 1**; ໄດ້ຮັບຂໍ້ມູນຂ່າວສານກ່ຽວກັບແຜນພັດທະນາໂຄງການລົງທຶນ, ຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ຈະເກີດໂຄງການລົງທຶນ;

**ຂໍ້ 4**; ເຂົ້າຮ່ວມກອງປະຊຸມປຶກສາຫາລືແຕ່ລະຂັ້ນ ກ່ຽວກັບບົດລາຍງານສຶກສາສິ່ງແວດລ້ອມເບື້ອງຕົ້ນ ແລະ ບົດລາຍງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສ);

**ຂໍ້ 5**; ເຂົ້າຮ່ວມຂະບວນການປຶກສາຫາລືກ່ຽວກັບການທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ;

**ຂໍ້ 7**; ສະເໜີແກ້ໄຂບັນຫາສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນເປັນລາຍລັກອັກສອນຕໍ່ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເພື່ອດຳເນີນການແກ້ໄຂບັນຫາສິ່ງແວດລ້ອມ ແລະ ສັງຄົມ ຫຼື ສະເໜີຕໍ່ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມໂດຍກົງ ໃນກໍລະນີສິ່ງແວດລ້ອມບໍ່ໄດ້ຮັບການແກ້ໄຂ;

**(ມາດຕາ 7 ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 112/ນຍ, ລົງວັນທີ 16/2/2010 ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ)**

## 1 ມັງກອນ January ພສ ໒໕໕໕ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | 1 ຮ.4 ດ.1 | 2 ຮ.5 ດ.1 | 3 ຮ.6 ດ.1 | 4 ຮ.7 ດ.1 | 5 ຮ.8 ດ.1 |
| 6 ຮ.9 ດ.1 | 7 ຮ.10 ດ.1 | 8 ຮ.11 ດ.1 | 9 ຮ.12 ດ.1 | 10 ຮ.13 ດ.1 | 11 ຮ.14 ດ.1 | 12 ຂ.1 ດ.6 |
| 13 ຂ.2 ດ.2 | 14 ຂ.3 ດ.2 | 15 ຂ.4 ດ.2 | 16 ຂ.5 ດ.2 | 17 ຂ.6 ດ.2 | 18 ຂ.7 ດ.2 | 19 ຂ.8 ດ.2 |
| 20 ຂ.9 ດ.2 | 21 ຂ.10 ດ.2 | 22 ຂ.11 ດ.2 | 23 ຂ.12 ດ.2 | 24 ຂ.13 ດ.2 | 25 ຂ.14 ດ.2 | 26 ຂ.15 ດ.2 |
| 27 ຮ.1 ດ.2 | 28 ຮ.2 ດ.2 | 29 ຮ.3 ດ.2 | 30 ຮ.4 ດ.2 | 31 ຮ.5 ດ.2 | | |

1. ປີໃໝ່ສາກົນ.
20. ວັນສ້າງຕັ້ງກອງທັບປະຊາຊົນລາວ.

## 2 ກຸມພາ February ພສ ໒໕໕໕ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | 1 ຮ.6 ດ.2 | 2 ຮ.7 ດ.2 |
| 3 ຮ.8 ດ.2 | 4 ຮ.9 ດ.2 | 5 ຮ.10 ດ.2 | 6 ຮ.11 ດ.2 | 7 ຮ.12 ດ.2 | 8 ຮ.13 ດ.2 | 9 ຮ.14 ດ.2 |
| 10 ຮ.15 ດ.2 | 11 ຂ.1 ດ.3 | 12 ຂ.2 ດ.3 | 13 ຂ.3 ດ.3 | 14 ຂ.4 ດ.3 | 15 ຂ.5 ດ.3 | 16 ຂ.6 ດ.3 |
| 17 ຂ.7 ດ.3 | 18 ຂ.8 ດ.3 | 19 ຂ.9 ດ.3 | 20 ຂ.10 ດ.3 | 21 ຂ.11 ດ.3 | 22 ຂ.12 ດ.3 | 23 ຂ.13 ດ.3 |
| 24 ຂ.14 ດ.3 | 25 ຂ.15 ດ.3 | 26 ຮ.1 ດ.3 | 27 ຮ.2 ດ.3 | 28 ຮ.3 ດ.3 | | |

1. ວັນສ້າງຕັ້ງສະຫະພັນກຳມະບານລາວ.
25. ວັນບຸນມາຄະບູຊາ, ບຸນວັດພູ.
    ບຸນນະມັດສະການພະທາດສີໂຄດຕະບອງ ແຂວງຄຳມ່ວນ

# ປະຊາຊົນມີສິດໄດ້ຮັບການທົດແທນຄ່າເສຍຫາຍ ຈາກໂຄງການເຂື່ອນ ແລະ ສຳປະທານທີ່ດິນ



**(ມາດຕາ 6 ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 192/ນຍ, ລົງວັນທີ7/7/2005 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ**

ສິດຂອງຜູ້ທີ່ໄດ້ຮັບການທົດແທນຄ່າເສຍຫາຍ, ການຊ່ວຍເຫຼືອໃນການຍົກຍ້າຍຈັດສັນ ແລະ ການຟື້ນຟູຊີວິດການເປັນຢູ່.

**ຂໍ້1**; ເຈົ້າຂອງໂຄງການ ຕ້ອງທົດແທນຄ່າເສຍຫາຍຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຍ້ອນການສູນເສຍສິດການນຳໃຊ້ທີ່ດິນ ແລະ ການສູນເສຍຊັບສິນ (ສິ່ງກໍ່ສ້າງ, ຜົນລະປູກ, ຕົ້ນໄມ້ ແລະ ຊັບຄົງທີ່ອື່ນໆ) ທີ່ຖືກເສຍຫາຍທັງໝົດ ຫຼື ສ່ວນໃດສ່ວນໜຶ່ງໃນມູນຄ່າປ່ຽນແທນ;

**ຂໍ້ 6**; ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ທີ່ຢູ່ອາໄສເຂດຊົນນະບົດ ຫຼື ເຂດຫ່າງໄກສອກຫຼີກທີ່ບໍ່ມີໃບຢັ້ງຢືນກຳມະສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຫຼື ເອກະສານທີ່ເປັນຫຼັກຖານຢັ້ງຢືນສິດໃນການນຳໃຊ້ທີ່ດິນ ຕໍ່ທີ່ດິນ ແລະ ຊັບສິນທີ່ເຂົາເຈົ້າຄຸ້ມຄອງນັ້ນ ຕ້ອງໄດ້ທົດແທນຕໍ່ການສູນເສຍ ດັ່ງກ່າວດ້ວຍມູນຄ່າປ່ຽນແທນ ແລະ ການຊ່ວຍເຫຼືອເພີ່ມເຕີມ ເພື່ອຮັບປະກັນຊີວິດການເປັນຢູ່ຂອງເຂົາເຈົ້າບໍ່ໃຫ້ຫຼຸດລົງຈາກເດີມຍ້ອນໂຄງການ.

**ການມີສ່ວນຮ່ວມ ແລະ ການປຶກສາຫາລືກັບປະຊາຊົນ**

**ຂໍ້ 1**; ເຈົ້າຂອງໂຄງການ ຕ້ອງຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນ ແບບມີສ່ວນຮ່ວມ, ຮັບປະກັນໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຂໍ້ມູນ ແລະ ໄດ້ເຂົ້າຮ່ວມປຶກສາຫາລືຢ່າງເຕັມສ່ວນ, ໄດ້ມີການພິຈາລະນາທຸກບັນຫາຂອງເຂົາເຈົ້າຢູ່ທຸກຂັ້ນຕອນຂອງການພັດທະນາໂຄງການ, ໂດຍສະເພາະຢູ່ໃນໄລຍະການວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານກ່ຽວກັບການເວນຄືນ, ການປະເມີນມູນຄ່າທີ່ດິນ ແລະ ຂະບວນການຍົກຍ້າຍຈັດສັນ;

**ຂໍ້ 2**; ເຈົ້າຂອງໂຄງການຕ້ອງໄດ້ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ຈຸດປະສົງຂອງໂຄງການ, ຮູບແບບການທົດແທນຄ່າເສຍຫາຍ ແລະ ອື່ນໆ ທີ່ເກີດຂຶ້ນຈາກໂຄງການ ເຊິ່ງຖືເປັນພາກສ່ວນໜຶ່ງຂອງຂະບວນການຍົກຍ້າຍ ຈັດສັນ ໂດຍຜ່ານສື່ສານມວນຊົນເຊັ່ນ: ໜັງສືພິມ, ວິທະຍຸ, ໂທລະພາບ, ການຈັດກອງປະຊຸມກັບປະຊາຊົນ ແລະ ວິທີການອື່ນໆ ເພື່ອແຈ້ງໃຫ້ອົງການປົກຄອງທ້ອງຖິ່ນຢູ່ຂັ້ນແຂວງ, ເມືອງ, ບ້ານ ແລະ ອົງການຈັດຕັ້ງມະຫາຊົນພ້ອມທັງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ທີ່ກ່ຽວຂ້ອງຊາບຕາມຄວາມຈຳເປັນ. (ມາດຕາ 12 ດຳລັດຂອງນາຍົກລັດຖະມົນຕີສະບັບເລກ ທີ192/ນຍ, ລົງວັນທີ7/7/2005 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ)

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ ໄດ້ອອກຄຳສັ່ງ ສະບັບເລກທີ 13/ນຍ, ລົງວັນທີ 11/6/2012 ວ່າດ້ວຍການໂຈະການພິຈາລະນາ ແລະ ອະນຸມັດໂຄງການລົງທຶນໃໝ່ ສຳລັບການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ, ປູກຢາງພາລາ ແລະ ໄມ້ວິກໃນຂອບເຂດທົ່ວປະເທດ**

## 3 ມີນາ March ພສ ໒໕໕໕ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | 1 ຮ.4 ດ.3 | 2 ຮ.5 ດ.3 |
| 3 ຮ.6 ດ.3 | 4 ຮ.7 ດ.3 | 5 ຮ.8 ດ.3 | 6 ຮ.9 ດ.3 | 7 ຮ.10 ດ.3 | 8 ຮ.11 ດ.3 | 9 ຮ.12 ດ.3 |
| 10 ຮ.13 ດ.3 | 11 ຮ.14 ດ.3 | 12 ຂ.1 ດ.4 | 13 ຂ.2 ດ.4 | 14 ຂ.3 ດ.4 | 15 ຂ.4 ດ.4 | 16 ຂ.5 ດ.4 |
| 17 ຂ.6 ດ.4 | 18 ຂ.7 ດ.4 | 19 ຂ.8 ດ.4 | 20 ຂ.9 ດ.4 | 21 ຂ.10 ດ.4 | 22 ຂ.11 ດ.4 | 23 ຂ.12 ດ.4 |
| 24 ຂ.13 ດ.4 | 25 ຂ.14 ດ.4 | 26 ຂ.15 ດ.4 | 27 ຮ.1 ດ.4 | 28 ຮ.2 ດ.4 | 29 ຮ.3 ດ.4 | 30 ຮ.4 ດ.4 |
| 31 ຮ.5 ດ.4 | | | | | | |

8. ວັນແມ່ຍິງສາກົນ.
22. ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ.

## 4 ເມສາ April ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | 1 ຮ.6 ດ.4 | 2 ຮ.7 ດ.4 | 3 ຮ.8 ດ.4 | 4 ຮ.9 ດ.4 | 5 ຮ.10 ດ.4 | 6 ຮ.11 ດ.4 |
| 7 ຮ.12 ດ.4 | 8 ຮ.13 ດ.4 | 9 ຮ.14 ດ.4 | 10 ຮ.15 ດ.4 | 11 ຂ.1 ດ.5 | 12 ຂ.2 ດ.5 | 13 ຂ.3 ດ.5 |
| 14 ຂ.4 ດ.5 | 15 ຂ.5 ດ.5 | 16 ຂ.6 ດ.5 | 17 ຂ.7 ດ.5 | 18 ຂ.8 ດ.5 | 19 ຂ.9 ດ.5 | 20 ຂ.10 ດ.5 |
| 21 ຂ.11 ດ.5 | 22 ຂ.12 ດ.5 | 23 ຂ.13 ດ.5 | 24 ຂ.14 ດ.5 | 25 ຂ.15 ດ.5 | 26 ຮ.1 ດ.5 | 27 ຮ.2 ດ.5 |
| 28 ຮ.3 ດ.5 | 29 ຮ.4 ດ.5 | 30 ຮ.5 ດ.5 | | | | |

14. ວັນສັງຂານລ່ວງ.
15. ວັນເນົາ.
14. ວັນສ້າງຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ.
16. ວັນຂຶ້ນປີໃໝ່ລາວ.

MONRE · LIWG Land Issues Working Group · Village Focus International · CIDSE · JVC Japan International Volunteer Center · OXFAM · Mennonite Central Committee · welt hunger hilfe · HELVETAS Swiss Intercooperation Laos · WWF · care · Wildlife Conservation Society · World Renew · Mekong Watch · PADETC · caritas Luxembourg · LUX DEV Luxembourg Agency for Development Cooperation · Norad · The Center for People and Forests · Swiss Agency for Development and Cooperation SDC · german cooperation

# ການຮັບຮູ້ສິດ ແລະ ການຄຸ້ມຄອງທີ່ດິນ ຂອງປະຊາຊົນຕາມປະເພນີ




## ສິດໃຊ້ທີ່ດິນຕາມປະເພນີ

ສິດໃຊ້ທີ່ດິນຕາມປະເພນີແມ່ນການປົກປັກຮັກສາ ແລະ ໃຊ້ທີ່ດິນ ດ້ວຍການບຸກເບີກພັດທະນາທີ່ດິນ ຫຼື ຕາມການຈັດສັນຂອງລັດມາເປັນປົກກະຕິ, ຕໍ່ເນື່ອງ ແລະ ຍາວນານມາຮອດປັດຈຸບັນ ໂດຍບໍ່ມີເອກະສານຢັ້ງຢືນ ສິດໃຊ້ຂອງຜູ້ກ່ຽວ, ການຈັດຕັ້ງ ແລະ ລວມບ້ານ.

ລັດຮັບຮູ້ສິດໃຊ້ທີ່ດິນຕາມປະເພນີຂອງບຸກຄົນ, ການຈັດຕັ້ງ ຫຼື ຂອງລວມບ້ານດ້ວຍການອອກໃບຕາດິນ ຫຼື ໃບແຜນທີ່ດິນ ຫຼື ໃບຢັ້ງຢືນທີ່ດິນ ໃຫ້ແຕ່ລະກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ໂດຍການຮ້ອງຂໍຂຶ້ນທະບຽນທີ່ດິນນຳອົງການຄຸ້ມຄອງທີ່ດິນ.

ການຮ້ອງຂໍຂຶ້ນທະບຽນທີ່ດິນ ຕ້ອງປະກອບເອກະສານຢັ້ງຢືນເຄົ້າມູນທີ່ດິນ, ພະຍານ, ຜູ້ໄດ້ຮັບສິດນຳໃຊ້ທີ່ດິນຂ້າງຄຽງ ແລະ ອົງການປົກຄອງບ້ານ ບ່ອນທີ່ດິນຕັ້ງຢູ່.

**(<u>ມາດຕາ26</u> ດຳລັດນາຍົກລັດຖະມົນຕີ <u>ສະບັບເລກທີ 88/ນຍ</u>, ລົງວັນທີ 3/6/2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ )**

## ການນຳໃຊ້ປ່າໄມ້ຕາມປະເພນີ

ການນຳໃຊ້ປ່າໄມ້ຕາມປະເພນີ ແມ່ນການຊົມໃຊ້ປ່າໄມ້ ແລະ ຜະລິດຕະພົນປ່າໄມ້ ທີ່ເຄີຍປະຕິບັດກັນມາໂດຍສອດຄ່ອງກັບລະບຽບກົດໝາຍ, ລັດອະນຸຍາດໃຫ້ຊົມໃຊ້ໄມ້ ແລະ ເກັບກູ້ຜະລິດຕະພົນປ່າໄມ້ປະເພດບໍ່ຫວງຫ້າມ ເພື່ອຊົມໃຊ້ໃນຄອບຄົວ ແຕ່ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ປ່າໄມ້, ຊັບພະຍາກອນປ່າໄມ້, ສິ່ງແວດລ້ອມ ແລະ ບໍ່ແຕະຕ້ອງເຖິງສິດຜົນປະໂຫຍດຂອງບຸກຄົນ ແລະ ການຈັດຕັ້ງອື່ນ.

ການຊົມໃຊ້ປ່າໄມ້ ແລະ ຜະລິດຕະພົນປ່າໄມ້ຕາມປະເພນີ ແມ່ນຕ້ອງປະຕິບັດຕາມແຜນຈັດສັນ ແລະ ກົດລະບຽບຂອງບ້ານທີ່ສອດຄ່ອງກັບກົດລະບຽບກົດໝາຍປ່າໄມ້.

**(<u>ມາດຕາ42</u> ກົດໝາຍວ່າດ້ວຍປ່າໄມ້ <u>ສະບັບເລກທີ 06/ສພຊ</u> ລົງວັນທີ24/ 12/ 2007)**

### 5 ພຶດສະພາ May ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | 1 ຮ.6 ດ.5 | 2 ຮ.7 ດ.5 | 3 ຮ.8 ດ.5 | 4 ຮ.9 ດ.5 |
| 5 ຮ.10 ດ.5 | 6 ຮ.11 ດ.5 | 7 ຮ.12 ດ.5 | 8 ຮ.13 ດ.5 | 9 ຮ.14 ດ.5 | 10 ຂ.1 ດ.6 | 11 ຂ.2 ດ.6 |
| 12 ຂ.3 ດ.6 | 13 ຂ.4 ດ.6 | 14 ຂ.5 ດ.6 | 15 ຂ.6 ດ.6 | 16 ຂ.7 ດ.6 | 17 ຂ.8 ດ.6 | 18 ຂ.9 ດ.6 |
| 19 ຂ.10 ດ.6 | 20 ຂ.11 ດ.6 | 21 ຂ.12 ດ.6 | 22 ຂ.13 ດ.6 | 23 ຂ.14 ດ.6 | 24 ຂ.15 ດ.6 | 25 ຮ.1 ດ.6 |
| 26 ຮ.2 ດ.6 | 27 ຮ.3 ດ.6 | 28 ຮ.4 ດ.6 | 29 ຮ.5 ດ.6 | 30 ຮ.6 ດ.6 | 31 ຮ.7 ດ.6 | |

1. ວັນກຳມະກອນສາກົນ.
24. ວັນບຸນວິສາຂະບູຊາ.

### 6 ມິຖຸນາ June ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | | 1 ຮ.8 ດ.6 |
| 2 ຮ.9 ດ.6 | 3 ຮ.10 ດ.6 | 4 ຮ.11 ດ.6 | 5 ຮ.12 ດ.6 | 6 ຮ.13 ດ.6 | 7 ຮ.14 ດ.6 | 8 ຮ.15 ດ.6 |
| 9 ຂ.1 ດ.7 | 10 ຂ.2 ດ.7 | 11 ຂ.3 ດ.7 | 12 ຂ.4 ດ.7 | 13 ຂ.5 ດ.7 | 14 ຂ.6 ດ.7 | 15 ຂ.7 ດ.7 |
| 16 ຂ.8 ດ.7 | 17 ຂ.9 ດ.7 | 18 ຂ.10 ດ.7 | 19 ຂ.11 ດ.7 | 20 ຂ.12 ດ.7 | 21 ຂ.13 ດ.7 | 22 ຂ.14 ດ.7 |
| 23 ຂ.15 ດ.7 | 24 ຮ.1 ດ.7 | 25 ຮ.2 ດ.7 | 26 ຮ.3 ດ.7 | 27 ຮ.4 ດ.7 | 28 ຮ.5 ດ.7 | 29 ຮ.6 ດ.7 |
| 30 ຮ.7 ດ.7 | | | | | | |

1. ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ

# ປະຊາຊົນມີສິດໃນການປົກປ້ອງທີ່ດິນ ແລະ ຊັບພະຍາກອນທຳມະຊາດຂອງຕົນເອງ



**ສິດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ**

ຜູ້ໄດ້ຮັບສິດນຳໃຊ້ທີ່ດິນມີສິດຕ່າງໆ ດັ່ງຕໍ່ໄປນີ້:

- ສິດປົກປັກຮັກສາທີ່ດິນ
- ສິດໃຊ້ທີ່ດິນ
- ສິດໄດ້ຮັບໝາກຜົນຈາກທີ່ດິນ
- ສິດໂອນສິດນຳໃຊ້ທີ່ດິນ

(<u>ມາດຕາ 53</u> ກົດໝາຍວ່າດ້ວຍທີ່ດິນ <u>ສະບັບເລກທີ 04/ສພຊ</u>, ລົງວັນທີ 21/ 10 / 2003)

ສິດໃຊ້ທີ່ດິນ

ສິດໃຊ້ທີ່ດິນແມ່ນສິດໃນການໃຊ້ທີ່ດິນເຂົ້າໃນເປົ້າໝາຍໃດໜຶ່ງ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງຜູ້ທີ່ໄດ້ຮັບສິດ ຕາມແຜນການຈັດສັນທີ່ດິນຂອງລັດ.

(<u>ມາດຕາ 55</u> ກົດໝາຍວ່າດ້ວຍທີ່ດິນ <u>ສະບັບເລກທີ 04/ສພຊ</u>, ລົງວັນທີ 21/ 10 /2003)

**ຂໍ້ 2;** ຜູ້ທີ່ໄດ້ຮັບຜົນກະທົບທີ່ເຄີຍມີລາຍຮັບຈາກການນຳໃຊ້ຊັບພະຍາກອນທຳມະຊາດເຊັ່ນ: ລ່າເນື້ອ, ຫາເຄື່ອງປ່າຂອງດົງ, ຫາປາ ແລະ ອື່ນໆ ກໍ່ມີສິດໄດ້ຮັບການທົດແທນຄວາມເສຍຫາຍເປັນເງິນສົດ ຫຼື ໄດ້ຮັບການຊ່ອຍເຫຼືອໃຫ້ມີວິທີການທຳມະຫາກິນໃໝ່ ແນໃສ່ປັບປຸງລາຍຮັບ ແລະ ຊີວິດການເປັນຢູ່ຂອງຄອບຄົວໃຫ້ດີຂຶ້ນ ຫຼື ຢ່າງໜ້ອຍກໍ່ຟື້ນຟູໃຫ້ຢູ່ລະດັບກ່ອນມີໂຄງການ.

(<u>ມາດຕາ 21</u> ຂໍ້ກຳນົດ<u>ສະບັບເລກທີ 2432/ອອຕສ-ສນຍ</u> ລົງວັນທີ 11/ 11/ 2005 ວ່າດ້ວຍການຈັດຕັ້ງປະຕິບັດດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ)

**ຊາວບ້ານມີສິດໃນການຕັດສິນວ່າຈະໃຫ້ ຫຼື ບໍ່ໃຫ້ສຳປະທານທີ່ດິນ ເພື່ອພັດທະນາກະສິກຳ ຫຼື ປ່າໄມ້**
**(ຄູ່ມືການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ແບບມີສ່ວນຮ່ວມ ຂັ້ນບ້ານ ແລະ ກຸ່ມບ້ານພັດທະນາ)**
**ຈຸດປະສົງ ແມ່ນເພື່ອຮັບປະກັນດ້ານສະບຽງອາຫານ ແລະ ຮັກສາແຫຼ່ງນ້ຳ**

## 7 ກໍລະກົດ July ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | 1 ຮ.8 ດ.7 | 2 ຮ.9 ດ.7 | 3 ຮ.10 ດ.7 | 4 ຮ.11 ດ.7 | 5 ຮ.12 ດ.7 | 6 ຮ.13 ດ.7 |
| 7 ຮ.14 ດ.7 | 8 ຂ.1 ດ.8 | 9 ຂ.2 ດ.8 | 10 ຂ.3 ດ.8 | 11 ຂ.4 ດ.8 | 12 ຂ.5 ດ.8 | 13 ຂ.6 ດ.8 |
| 14 ຂ.7 ດ.8 | 15 ຂ.8 ດ.8 | 16 ຂ.9 ດ.8 | 17 ຂ.10 ດ.8 | 18 ຂ.11 ດ.8 | 19 ຂ.12 ດ.8 | 20 ຂ.13 ດ.8 |
| 21 ຂ.14 ດ.8 | 22 ຂ.15 ດ.8 | 23 ຮ.1 ດ.8 | 24 ຮ.2 ດ.8 | 25 ຮ.3 ດ.8 | 26 ຮ.4 ດ.8 | 27 ຮ.5 ດ.8 |
| 28 ຮ.6 ດ.8 | 29 ຮ.7 ດ.8 | 30 ຮ.8 ດ.8 | 31 ຮ.9 ດ.8 | | | |

13. ວັນຄ້າຍວັນເກີດທ່ານປະທານ ສຸພານຸວົງ.
20. ວັນແມ່ຍິງລາວ.
22. ວັນບຸນເຂົ້າພັນສາ.

## 8 ສິງຫາ August ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | 1 ຮ.10 ດ.8 | 2 ຮ.11 ດ.8 | 3 ຮ.12 ດ.8 |
| 4 ຮ.13 ດ.8 | 5 ຮ.14 ດ.8 | 6 ຮ.15 ດ.8 | 7 ຂ.1 ດ.9 | 8 ຂ.2 ດ.9 | 9 ຂ.3 ດ.9 | 10 ຂ.4 ດ.9 |
| 11 ຂ.5 ດ.9 | 12 ຂ.6 ດ.9 | 13 ຂ.7 ດ.9 | 14 ຂ.8 ດ.9 | 15 ຂ.9 ດ.9 | 16 ຂ.10 ດ.9 | 17 ຂ.11 ດ.9 |
| 18 ຂ.12 ດ.9 | 19 ຂ.13 ດ.9 | 20 ຂ.14 ດ.9 | 21 ຂ.15 ດ.9 | 22 ຮ.1 ດ.9 | 23 ຮ.2 ດ.9 | 24 ຮ.3 ດ.9 |
| 25 ຮ.4 ດ.9 | 26 ຮ.5 ດ.9 | 27 ຮ.6 ດ.9 | 28 ຮ.7 ດ.9 | 29 ຮ.8 ດ.9 | 30 ຮ.9 ດ.9 | 31 ຮ.10 ດ.9 |

15. ວັນປະກາດໃຊ້ລັດຖະທຳມະນູນ.
23. ວັນຍຶດອຳນາດທົ່ວປະເທດ.










ພົນລະເມືອງລາວມີສິດຮ້ອງທຸກ, ຮ້ອງຟ້ອງ ແລະ ສະເໜີຄວາມເຫັນຕໍ່ອົງການ ການກຳນົດເວລາການຍື່ນຄຳສະເໜີຕໍ່ອົງການບໍລິຫານລັດ ຕ້ອງດຳເນີນພາຍໃນສາມປີ ນັບແຕ່ວັນທີ່ກົດລະເມີດເປັນຕົ້ນໄປ.

ຄຳຮ້ອງທຸກ, ຄຳຮ້ອງຟ້ອງ ແລະ ຄວາມເຫັນຂອງພົນລະເມືອງ ຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

(ມາດຕາ 41 ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບເລກທີ 32/ສປປ, ລົງວັນທີ 23/5/2003)

## ການກຳນົດເວລາໃນການຍື່ນຄຳຮ້ອງ ແລະ ການແກ້ໄຂຄຳສະເໜີ

ການກຳນົດເວລາການຍື່ນຄຳສະເໜີຕໍ່ອົງການບໍລິຫານລັດ ຕ້ອງດຳເນີນພາຍໃນສາມປີ ນັບແຕ່ວັນທີ່ກົດລະເມີດເປັນຕົ້ນໄປ.

ການແກ້ໄຂຄຳສະເໜີຕ້ອງພິຈາລະນາ ພາຍໃນກຳນົດຊາວວັນ ນັບແຕ່ໄດ້ຮັບຄຳສະເໜີເປັນຕົ້ນໄປ.

ໃນກໍລະນີ ຄຳສະເໜີບໍ່ໄດ້ຮັບການພິຈາລະນາແກ້ໄຂຕາມກຳນົດເວລາ ຜູ້ສະເໜີມີສິດຍື່ນຄຳສະເໜີດັ່ງກ່າວຕໍ່ຂັ້ນເທິງກົດນັ້ນ. ຖ້າຫາກຍັງບໍ່ໄດ້ຮັບການແກ້ໄຂຕາມກຳນົດເວລາອີກແລ້ວ ຜູ້ສະເໜີມີສິດຮ້ອງຟ້ອງຕໍ່ສານ ຫຼື ຮ້ອງຂໍຄວາມເປັນທຳຕໍ່ສະພາແຫ່ງຊາດ.

(ມາດຕາ19 ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບ ເລກທີ07/ສພຊ, ລົງວັນທີ9/11/2005).

**9** ກັນຍາ September ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| 1 ຮ.11 ດ.9 | 2 ຮ.12 ດ.9 | 3 ຮ.13 ດ.9 | 4 ຮ.14 ດ.9 | 5 ຂ.1 ດ.10 | 6 ຂ.2 ດ.10 | 7 ຂ.3 ດ.10 |
| 8 ຂ.4 ດ.10 | 9 ຂ.5 ດ.10 | 10 ຂ.6 ດ.10 | 11 ຂ.7 ດ.10 | 12 ຂ.8 ດ.10 | 13 ຂ.9 ດ.10 | 14 ຂ.10 ດ.10 |
| 15 ຂ.11 ດ.10 | 16 ຂ.12 ດ.10 | 17 ຂ.13 ດ.10 | 18 ຂ.14 ດ.10 | 19 ຂ.15 ດ.10 | 20 ຮ.1 ດ.10 | 21 ຮ.2 ດ.10 |
| 22 ຮ.3 ດ.10 | 23 ຮ.4 ດ.10 | 24 ຮ.5 ດ.10 | 25 ຮ.6 ດ.10 | 26 ຮ.7 ດ.10 | 27 ຮ.8 ດ.10 | 28 ຮ.9 ດ.10 |
| 29 ຮ.10 ດ.10 | 30 ຮ.11 ດ.10 | | | | | |

4. ວັນບຸນຫໍ່ເຂົ້າປະດັບດິນ.
19. ວັນບຸນຫໍ່ເຂົ້າສະຫລາກ

**10** ຕຸລາ October ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | 1 ຮ.12 ດ.10 | 2 ຮ.13 ດ.10 | 3 ຮ.14 ດ.10 | 4 ຮ.15 ດ.10 | 5 ຂ.1 ດ.11 |
| 6 ຂ.2 ດ.11 | 7 ຂ.3 ດ.11 | 8 ຂ.4 ດ.11 | 9 ຂ.5 ດ.11 | 10 ຂ.6 ດ.11 | 11 ຂ.7 ດ.11 | 12 ຂ.8 ດ.11 |
| 13 ຂ.9 ດ.11 | 14 ຂ.10 ດ.11 | 15 ຂ.11 ດ.11 | 16 ຂ.12 ດ.11 | 17 ຂ.13 ດ.11 | 18 ຂ.14 ດ.11 | 19 ຂ.15 ດ.11 |
| 20 ຮ.1 ດ.11 | 21 ຮ.2 ດ.11 | 22 ຮ.3 ດ.11 | 23 ຮ.4 ດ.11 | 24 ຮ.5 ດ.11 | 25 ຮ.6 ດ.11 | 26 ຮ.7 ດ.11 |
| 27 ຮ.8 ດ.11 | 28 ຮ.9 ດ.11 | 29 ຮ.10 ດ.11 | 30 ຮ.11 ດ.11 | 31 ຮ.12 ດ.11 | | |

7. ວັນຄູແຫ່ງຊາດ.
12. ວັນປະກາດເອກະລາດ.
19. ວັນບຸນອອກພັນສາ.
20. ບຸນຊ່ວງເຮືອ ນະຄອນຫລວງວຽງຈັນ.

# ຄວາມໂປ່ງໃສໃນການຄຸ້ມຄອງ ແລະ ບໍລິຫານທີ່ດິນ





## ມາດຕະການຕໍ່ຜູ້ລະເມີດ

ພະນັກງານລັດຖະກອນຄຸ້ມຄອງທີ່ດິນ ຜູ້ໃດຫາກໄດ້ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ອຳນາດເກີນຂອບເຂດ, ຮັບສິນບົນ, ປອມແປງເອກະສານຈະຖືກປະຕິບັດວິໄນຕາມລະບຽບລັດຖະກອນ ພ້ອມທັງຖືກດຳເນີນຄະດີຕາມກົດໝາຍ.

ບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ ຫາກໃຫ້ສິນບົນແກ່ພະນັກງານ, ລັດຖະກອນຄຸ້ມຄອງທີ່ດິນ ເພື່ອໃຫ້ໄດ້ສິດນຳໃຊ້ທີ່ດິນ, ສິດໃຊ້, ໃບຕາດິນ ຫຼື ເອກະສານຢັ້ງຢືນອື່ນໆ ກໍ່ຈະຖືກດຳເນີນຄະດີຕາມກົດໝາຍ

## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງໃດທີ່ໄດ້ນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍທີ່ດິນ, ມີປະສິດທິພາບ ແລະ ປະສິດທິຜົນສູງ ເຮັດໃຫ້ດິນມີຄຸນຄ່າ ແລະ ມູນຄ່າສູງເພີ່ມຂຶ້ນຈະໄດ້ຮັບນະໂຍບາຍຫຼຸດຜ່ອນພາສີ, ອາກອນ, ໄດ້ຮັບຄວາມສະດວກໃນການຕໍ່ອາຍຸສັນຍາເຊົ່າ ຫຼື ສຳປະທານ.

(ມາດຕາ 35, 36 ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກ ທີ88/ນຍ, ລົງວັນທີ 3/6/2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ)
ມາດຕະການຕໍ່ຜູ້ລະເມີດ

### 11 ພະຈິກ November ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | 1 ຮ.13 ດ.11 | 2 ຮ.14 ດ.11 |
| 3 ຂ.1 ດ.12 | 4 ຂ.2 ດ.12 | 5 ຂ.3 ດ.12 | 6 ຂ.4 ດ.12 | 7 ຂ.5 ດ.12 | 8 ຂ.6 ດ.12 | 9 ຂ.7 ດ.12 |
| 10 ຂ.8 ດ.12 | 11 ຂ.9 ດ.12 | 12 ຂ.10 ດ.12 | 13 ຂ.11 ດ.12 | 14 ຂ.12 ດ.12 | 15 ຂ.13 ດ.12 | 16 ຂ.14 ດ.12 |
| 17 ຂ.15 ດ.12 | 18 ຮ.1 ດ.12 | 19 ຮ.2 ດ.12 | 20 ຮ.4 ດ.12 | 21 ຮ.3 ດ.12 | 22 ຮ.5 ດ.12 | 23 ຮ.6 ດ.12 |
| 24 ຮ.7 ດ.12 | 25 ຮ.8 ດ.12 | 26 ຮ.9 ດ.12 | 27 ຮ.10 ດ.12 | 28 ຮ.11 ດ.12 | 29 ຮ.12 ດ.12 | 30 ຮ.13 ດ.12 |

17. ວັນບຸນພະທາດຫລວງນະຄອນຫລວງວຽງຈັນ
25. ວັນສາກົນເພື່ອຕໍ່ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

### 12 ທັນວາ December ພສ ໒໕໕໖ ຄສ 2013

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| 1 ຮ.14 ດ.12 | 2 ຮ.15 ດ.12 | 3 ຂ.1 ດ.1 | 4 ຂ.2 ດ.1 | 5 ຂ.3 ດ.1 | 6 ຂ.4 ດ.1 | 7 ຂ.5 ດ.1 |
| 8 ຂ.6 ດ.1 | 9 ຂ.7 ດ.1 | 10 ຂ.8 ດ.1 | 11 ຂ.9 ດ.1 | 12 ຂ.10 ດ.1 | 13 ຂ.11 ດ.1 | 14 ຂ.12 ດ.1 |
| 15 ຂ.13 ດ.1 | 16 ຂ.14 ດ.1 | 17 ຂ.15 ດ.1 | 18 ຮ.1 ດ.1 | 19 ຮ.2 ດ.1 | 20 ຮ.3 ດ.1 | 21 ຮ.4 ດ.1 |
| 22 ຮ.5 ດ.1 | 23 ຮ.6 ດ.1 | 24 ຮ.7 ດ.1 | 25 ຮ.8 ດ.1 | 26 ຮ.9 ດ.1 | 27 ຮ.10 ດ.1 | 28 ຮ.11 ດ.1 |
| 29 ຮ.12 ດ.1 | 30 ຮ.13 ດ.1 | 31 ຮ.14 ດ.1 | | | | |

2. ວັນສະຖາປະນາ ສ.ປ.ປ.ລາວ
13. ວັນຄ້າຍວັນເກີດ ທ່ານ ປະທານ ໄກສອນ ພົມວິຫານ